# ພຣະທັມນາຮູມ

1 2 3

## ນາຮູມ

### 1.

1 ຕໍ່ໄປນີ້ກ່ຽວຂ້ອງກັບນະຄອນນີເນເວ ຫນັງສືເຣື່ອງນິມິດຂອງນາຮູມຊາວເມືອງເອນໂກສ

**ພຣະພິໂຣດຂອງພຣະເຈົ້າເພື່ອແກ້ແຄ້ນ**

2 ພຣະເຈົ້າຊົງເປັນພຣະເຈົ້າຜູ້ຊົງຫວງແຫນແລະຊົງແກ້ແຄ້ນ ພຣະເຈົ້າຊົງແກ້ແຄ້ນແລະຊົງມີພຣະພິໂຣດ
ພຣະເຈົ້າຊົງແກ້ແຄ້ນສັດຕຣູຂອງພຣະອົງ ແລະຊົງເກັບຄວາມໂກດໄວ້ໃຫ້ປັດຈາມິດຂອງພຣະອົງ
3 ພຣະຜູ້ເປັນເຈົ້າຊົງກິ້ວຊ້າ ຊົງຣິດທານຸພາບຍິ່ງໃຫຍ່ ພຣະຜູ້ເປັນເຈົ້າຈະບໍ່ຊົງງົດໂທດເລີຍ ພຣະມັນຄາ
ຂອງພຣະອົງຢູ່ໃນລົມບ້າຫມູແລະພະຍຸ ແລະເມກເປັນຜົງຝຸ່ນດິນແຫ່ງພຣະບາດຂອງພຣະອົງ
4 ພຣະອົງຊົງຫ້າມທະເລ ຊົງກະທຳໃຫ້ມັນແຫ້ງ ຊົງໃຫ້ແມ່ນ້ຳທັງຫລາຍແຫ້ງໄປ ບາຊານແລະກາເມນກໍຫ່ຽວ
ແລະແຂນອ່ອນໆຂອງເລບານອນກໍແຫ້ງໄປ
5 ຕໍ່ເບື້ອງພຣະພັກພຣະອົງ ພູເຂົາກໍສັ່ນສະເທືອນ ແລະເນີນເຂົາກໍລະລາຍໄປ ແຜ່ນດິນກໍຫວັ່ນໄຫວຕໍ່ເບື້ອງ
ພຣະພັກພຣະອົງ ທັງໂລກແລະສິ່ງທີ່ອາໄສຢູ່ໃນໂລກດ້ວຍ
6 ໃຜຈະຕ້ານທານພຣະພິໂຣດຂອງພຣະອົງໄດ້? ໃຜຈະທົນຕໍ່ຄວາມຮ້ອນແຮງແຫ່ງຄວາມກິ້ວຂອງພຣະອົງ
ໄດ້? ພຣະພິໂຣດຂອງພຣະອົງພຸ່ງອອກມາຢ່າງກັບໄຟ ໂດຍພຣະອົງສີລາກໍແຕກ
7 ພຣະເຈົ້າປະເສີດ ຊົງເປັນທີ່ກຳບັງເຂັ້ມແຂງໃນວັນຍາກລຳບາກ ພຣະອົງຊົງຮູ້ຈັກຜູ້ທີ່ເຂົ້າມາລີ້ໄພຢູ່ໃນ
ພຣະອົງ
8 ແຕ່ພຣະອົງຈະຊົງກະທຳໃຫ້ສັດຕຣູຂອງພຣະອົງສິ້ນສຸດລົງ ດ້ວຍນ້ຳຖ້ວມທີ່ໄຫລຖ້ວມທົ້ນ ແລະຈະຊົງໄລ່
ໃຫ້ຜູ້ທີ່ແຂງຂໍ້ຂອງພຣະອົງເຂົ້າໄປໃນຄວາມມືດ
9 ເຈົ້າຄິດອຸບາຍອັນໃດຕໍ່ພຣະເຈົ້າ ພຣະອົງຈະຊົງທຳລາຍໃຫ້ສິ້ນໄປ ການບີບບັງຄັບຈະບໍ່ໂຜ່ຂຶ້ນເປັນຄຳຮັບ
ທີ່ສອງ
10 ແມ້ວ່າເຂົາທັງຫລາຍເຫມືອນຫນາມໄກ່ໄຫ້ທີ່ກ່ຽວກັນຫຍຸ້ງ ແລະເມົາຕາມຂະຫນາດທີ່ເຂົາດື່ມ ເຂົາຈະຖືກ
ເຜົາຜານສິ້ນເຫມືອນຕໍເຂົ້າທີ່ແຫ້ງແລ້ວ
11 ເຄີຍມີຜູ້ນຶ່ງມາຈາກພວກເຈົ້າ ທີ່ຄິດອຸບາຍຊົ່ວຮ້າຍຕໍ່ພຣະເຈົ້າ ແລະແນະນຳການອະທັມ
12 ພຣະເຈົ້າຊົງກ່າວດັ່ງນີ້ວ່າ, "ແມ້ວ່າ ພວກນັ້ນຈະແຂງແຮງແລະມີຈຳນວນມາກມາຍດ້ວຍ ເຂົາກໍຈະຖືກຕັດ
ຂາດແລະສິ້ນໄປ ເຖິງແມ່ນວ່າເຮົາໃຫ້ເຈົ້າທຸກໃຈ ແຕ່ເຮົາຈະບໍ່ໃຫ້ເຈົ້າທຸກໃຈອີກຕໍ່ໄປ
13 ບັດນີ້ ເຮົາຈະຫັກແອກຂອງເຂົາເສັຽຈາກເຈົ້າ ແລະຈະລະເບີດເຄື່ອງຈຳຈອງຂອງເຈົ້າໃຫ້ສລາຍໄປ"

14 ພຣະເຈົ້າໄດ້ຊົງບັນຊາດ້ວຍເຣື່ອງເຈົ້າວ່າ, “ເຂົາຈະບໍ່ຫວ່ານຊື່ຂອງເຈົ້າໃຫ້ແຜ່ຫລາຍອີກຕໍ່ໄປ ເຮົາຈະກຳຈັດຮູບເຄົາຣົບທີ່ສລັກແລະຮູບເຄົາຣົບທີ່ຫລໍ່ອອກເສັຽຈາກວິຫານແຫ່ງພຣະຂອງເຂົາ ເຮົາຈະຂຸດຫລຸມສົບໃຫ້ເຈົ້າ ເພາະເຈົ້າຊົ່ວຫລາຍ”

**ຂ່າວເຣື່ອງກຸງນີເນເວຫລົ່ມ**

15 ເບິ່ງແມ໋, ຕີນຂອງຜູ້ນຳຂ່າວດີມາທີ່ເທິງພູເຂົາ ຜູ້ໂຄສະນາສັນຕິພາບ ໂອ ຢູດາເອີຍ ຈົ່ງຮັກສາປະເພນີການລ້ຽງຂອງເຈົ້າໄວ້ ຈົ່ງແກ້ບົນຂອງເຈົ້າເສັຽ ເພາະວ່າຄົນອະທັມຈະບໍ່ມາຫາເຈົ້າອີກ ເຂົາຖືກກຳຈັດເສັຽສິ້ນແລ້ວ

## 2.

1 ຜູ້ໂຈມຕີໄດ້ຂຶ້ນມາຕໍ່ສູ້ກັບເຈົ້າແລ້ວ ຈົ່ງເຂົ້າປະຈຳປ້ອມ ຈົ່ງເຝົ້າທາງໄວ້ ຈົ່ງຄາດເອວໄວ້ ຈົ່ງຮວມກຳລັງໄວ້ໃຫ້ຫມົດ

2 (ເພາະວ່າພຣະຜູ້ເປັນເຈົ້າຊົງກະທຳໃຫ້ຄວາມໂອ່ອ່າຕະການຂອງຢາໂຄບກັບສູ່ສະພາບເດີມ ຢ່າງກັບຄວາມໂອ່ອ່າຕະການຂອງອິສຣາເອນ ເພາະວ່າພວກປຸ້ນໄດ້ປຸ້ນເອົາໄປ ແລະໄດ້ທຳລາຍກິ່ງກ້ານຂອງເຂົາໃຫ້ພິນາດ)

3 ໂລ່ຂອງທະຫານນັ້ນສີແດງ ແລະທະຫານຂອງເຂົາກໍແຕ່ງກາຍສີແດງເຂັ້ມໃນວັນຕຽມພ້ອມ ຣົດຮົບກໍແວວວັບເປັນແສງ ແລະມ້າເສິກກໍຜາດໂຜນໄປມາ

4 ຣົດຮົບແລ່ນໄປຕາມຖນົນ ມັນຮີບໄປຮີບມາທີ່
ກາງເມືອງສ່ອງແສງເຫມືອນໄຟ ແລະພຸ່ງໄປຢ່າງສາຍຟ້າແມບເຫລື້ອມ

5 ນາຍທະຫານຖືກເອີ້ນຕົວ ເຂົາກໍສະດຸດເມື່ອເຂົາຍ່າງໄປ ເຂົາຮີບກົງໄປທີ່ກຳແພງເມືອງມີໄຟກັບອາວຸດຕັ້ງຂຶ້ນ

6 ປະຕູທີ່ແມ່ນ້ຳເປີດແລ້ວ ທີ່ພຣະຣາຊວັງກໍອົບລະຫມ່ານ

7 ພຣະນາງຖືກປຸ້ນເຄື່ອງຊົງ ເຂົາຈັບພຣະນາງເອົາໄປ ບັນດາສາວໃຊ້ກໍໂອດຄວນສຽງນາງໂສກເສົ້າດັ່ງສຽງນົກເຂົາ ຕີເອິກຊົກໃຈຂອງຕົນ

8 ນີເນເວກໍເຫມືອນສະນ້ຳທີ່ນ້ຳໄຫລອອກມາ ເຂົາທັງຫລາຍຮ້ອງວ່າ, “ຢຸດ ຢຸດ” ແຕ່ບໍ່ມີໃຜຫັນກັບ

9 ປຸ້ນເອົາເງິນເຖີດ ປຸ້ນເອົາທອງຄຳ ມີຊັບສົມບັດມາກມາຍບໍ່ຮູ້ສິ້ນສຸດ ມີຂອງມີຄ່າທຸກຢ່າງເປັນຊັບມັ່ງຄັ່ງ

10 ວ່າງເປົ່າ ຄວາມເປົ່າປ່ຽວ ແລະຄວາມພິນາດ ຈິດໃຈກໍສະລາຍໄປແລະຫົວເຂົ່າກໍສັ່ນ ບັ້ນເອວກໍປວດຮ້າວໄປຫມົດ ໃບຫນ້າທຸກຄົນຊີດເຫລືອງ

11 ບ່ອນຂອງສິງຢູ່ທີ່ໃດ? ຄືຖ້ຳຂອງສິງຫນຸ່ມບ່ອນທີ່ສິງເຄີຍຍ່າງເຂົ້າໄປ ບ່ອນທີ່ລູກຂອງມັນເຄີຍຢູ່ບໍ່ມີຜູ້ໃດໄປຣົບກວນໄດ້

12 ສິງນັ້ນໄດ້ຈີກອາຫານໃຫ້ລູກຂອງມັນພໍກິນ ແລະໄດ້ຄາບຄໍເຫຍື່ອມາໃຫ້ເຫລົ່າເມັຽຂອງມັນ ມັນສະສົມ
ເຫຍື່ອເຕັມຖ້ຳ ແລະສະສົມຊີ້ນທີ່ມັນຂ້າມາໄດ້
13 ພຣະຜູ້ເປັນເຈົ້າຈອມໂຍທາສັ່ງວ່າ, "ເບິ່ງແມ່ ເຮົາຕໍ່ສູ້ເຈົ້າ ເຮົາຈະຜານຣົດຮົບຂອງເຈົ້າໃຫ້ເປັນຄວັນ ແລະ
ດາບຈະສັງຫານສິງໜຸ່ມຂອງເຈົ້າ ເຮົາຈະກຳຈັດເຫຍື່ອຂອງເຈົ້າເສັຽຈາກໂລກ ແລະຈະບໍ່ມີໃຜໄດ້ຍິນສຽງ
ຜູ້ນຳຂ່າວຂອງເຈົ້າອີກ

## 3.

1 ວິບັດແກ່ເມືອງທີ່ແປະເປື້ອນໄປດ້ວຍໂລຫິດ ເຕັມດ້ວຍການມຸສາ ແລະຂອງຍຶດທຳການປຸ້ນເຂົາຢ່າງບໍ່ຢຸດ
ຢ່ອນເລີຍ
2 ສຽງຂອງໄມ້ແສ້ ແລະສຽງລໍ້ຣົດໝູນໄປ ສຽງມ້າແລ່ນຫອບໄປ ແລະຣົດຮົບກະທົບກະແທກ
3 ພົນມ້າເຂົ້າປະຈັນບານ ດາບແວບວາບ ແລະຫອກແວວວາວ ຄົນຖືກຂ້າເປັນກ່າຍກອງ ຊາກສົບກອງຂຶ້ນ
ຮ່າງຄົນຕາຍບໍ່ຮູ້ຈັກຈົບສິ້ນ ເຂົາຈະສະດຸດຮ່າງນັ້ນ
4 ທັງນີ້ເພາະການແພດສະຍາ ນັບບໍ່ຖ້ວນຂອງຍິງແພດສະຍານັ້ນ ຜູ້ມີສເນ່ແລະເປັນຈອມຍົ້ວຍວນ ນາງໄດ້
ຂາຍປະຊາຊາດເສັຽດ້ວຍການແພດສະຍາຂອງນາງ ແລະຂາຍບັນດາຕະກູນມະນຸດດ້ວຍວິທະຍາຄົມຂອງ
ນາງ
5 ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ເບິ່ງແມ່, ເຮົາຕໍ່ສູ້ເຈົ້າ ແລະຈະຍົກກະໂປງຂອງເຈົ້າຄຸມໜ້າເຈົ້າ ເຮົາ
ຈະໃຫ້ບັນດາປະຊາຊາດມອງເບິ່ງຄວາມເປືອຍເປົ່າຂອງເຈົ້າ ແລະໃຫ້ຣາຊອານາຈັກທັງຫລາຍ ມອງເບິ່ງ
ຄວາມອັບອາຍຂອງເຈົ້າ
6 ເຮົາຈະໂຍນສິ່ງໂສໂຄກໃສ່ເຈົ້າ ແລະຢຽດຫຍາມເຈົ້າ ແລະຈະປະຈານເຈົ້າ
7 ທຸກຄົນທີ່ແລເຫັນເຈົ້າຈະໜີໄປຈາກເຈົ້າ ແລະກ່າວວ່າ ນີເນເວເປັນເມືອງຮ້າງເສັຽແລ້ວ ໃຜຈະສົງສານ
ນາງ ຈະໄປຫາໃຜທີ່ໃດມາເລົ້າໂລມນາງໄດ້
8 ເຈົ້າວິເສດກວ່າເມືອງເທເບສ ຊຶ່ງຕັ້ງຢູ່ຮິມແມ່ນ້ຳນິນຫລື ຊຶ່ງມີນ້ຳອ້ອມນະຄອນ ມີທະເລເປັນທີ່ກຳບັງ ມີ
ຫ້ວງນ້ຳເປັນກຳແພງເມືອງ
9 ເອທີໂອເປັຽເປັນກຳລັງຂອງເມືອງນີ້ ທັງເອຢິບ ແລະກໍບໍ່ຈຳກັດເສັຽດ້ວຍ ພູທ ແລະລີເບັຽເປັນຜູ້ຊ່ອຍເມືອງ
ນັ້ນ
10 ເຖິງປານນັ້ນເມືອງນັ້ນກໍຍັງຖືກກວາດໄປ ນາງຕົກໄປເປັນຊະເລີຍ ລູກໆຂອງນາງໄດ້ຖືກຕີຈົນຕາຍຕາມຖ
ນົນທົນທາງ ເຂົາຈັບສະຫລາກແບ່ງຜູ້ມີກຽດຂອງເມືອງນັ້ນ ແລະຄົນໃຫຍ່ຄົນໂຕທັງສິ້ນຂອງເມືອງນັ້ນກໍຖືກ
ລ່າມໂຊ່
11 ເຈົ້າຈະມືນເມົາໄປດ້ວຍ ເຈົ້າຈະງົງງວຍໄປ ເຈົ້າຈະຊອກຫາທີ່ລີ້ພັຍຈາກສັດຕຣູ

12 ປ້ອມປ້ອງກັນທັງຫມົດຂອງເຈົ້າ ຈະເປັນເຫມືອນຕົ້ນຫມາກເດື່ອ ມີຜົນຫມາກເດື່ອສຸກຮຸ່ນທຳອິດ ຖ້າສັ່ນຕົ້ນ
ຂອງມັນກໍຈະຕົກລົງໄປໃນປາກຂອງຜູ້ກິນ
13 ເບິ່ງແມ່, ກອງທັບຂອງເຈົ້າ ກໍເຫມືອນຜູ້ຍິງຢູ່ຖ້າມກາງເຈົ້າ ປະຕູເມືອງແຫ່ງແຜ່ນດິນຂອງເຈົ້າກໍເປີດກວ້າງ
ໃຫ້ແກ່ສັດຕຣູຂອງເຈົ້າ ໄຟໄດ້ໄຫມ້ດານປະຕູຂອງເຈົ້າຫມົດແລ້ວ
14 ຈົ່ງຂົນນ້ຳຂຶ້ນໄວ້ເພາະຈະຖືກລ້ອມ ຈົ່ງເສີມກຳລັງປ້ອມປ້ອງກັນຂອງເຈົ້າ ຈົ່ງລົງໄປໃນບໍ່ດິນປຽກ ຍ່ຳປູນສໍ
ໃຫ້ເຂົ້າກັນດີ ແລະໄປເອົາພິມອິດມາ
15 ໄຟກໍເຜົາເຈົ້າທີ່ນັ້ນ ດາບກໍຈະຟັນເຈົ້າ ມັນຈະກິນເຈົ້າເສັຽຢ່າງຕັກແຕນວັຍກະໂດດ ຈົ່ງເພີ້ມພວກເຈົ້າໃຫ້
ຫລາຍຢ່າງຕັກແຕນວັຍກະໂດດ ຈົ່ງເພີ້ມໃຫ້ຫລາຍເຫມືອນຕັກແຕນວັຍບິນ
16 ເຈົ້າເພີ້ມພວກພໍ່ຄ້າໃຫ້ຫລາຍກວ່າດວງດາວໃນທ້ອງຟ້າ ຕັກແຕນວັຍກະໂດດນັ້ນລອກຄາບແລ້ວກໍບິນໄປ
ເສັຽ
17 ເຈົ້ານາຍຂອງເຈົ້າກໍເຫມືອນຕັກແຕນວັຍບິນ ພວກຂ້າຣາຊການຂອງເຈົ້າກໍເຫມືອນກໍເປັນເຫມືອນຝູງຕັກ
ແຕນທີ່ຈັບຢູ່ຮົ້ວໃນຍາມອາກາດເຢັນ ພໍດວງຕາເວັນຂຶ້ນມັນກໍບິນໄປຫມົດ ບໍ່ມີໃຜຮູ້ວ່າມັນໄປທີ່ໃດ?
18 ໂອ ກະສັດແຫ່ງອັສຊີເຣັຽເອີຍ ຜູ້ລ້ຽງແກະຂອງເຈົ້າຫລັບເສັຽແລ້ວ ເຈົ້ານາຍຂອງເຈົ້າກໍເຄີ້ມຫລັບໄປ ຊົນ
ຊາດຂອງເຈົ້າກະຈັດກະຈາຍຢູ່ເທິງພູເຂົາ ບໍ່ມີຜູ້ໃດຮວບຮວມເອົາມາໄດ້
19 ຄວາມເຈັບປວດຂອງເຈົ້າບໍ່ມີບັນເທົາ ບາດແຜຂອງເຈົ້າກໍສາຫັດ ທຸກຄົນໄດ້ຍິນຂ່າວຂອງເຈົ້າ ເຂົາກໍຕົບມື
ເຍາະເຍີ້ຍເຈົ້າ ມີໃຜແດ່ທີ່ບໍ່ໄດ້ຮັບໄພອັນຮ້າຍແຮງທີ່ບໍ່ມີສິ້ນສຸດຂອງເຈົ້າ